ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ການປະເມີນຮອບດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ




ກອງປະຊຸມການປະເມີນຮອບດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ໄດ້ຈັດຂຶ້ນໃນຮູບແບບທາງໄກ ໃນລະຫວ່າງວັນທີ 31 ສິງຫາ ຫາ ວັນທີ 03 ກັນຍາ 2020 ທີ່ຫ້ອງປະຊຸມໃຫຍ່ ຕຶກຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ ລະຫວ່າງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ຂອງ ສປປ ລາວ ກັບ ກອງເລຂາກຸ່ມອາຊີປາຊີຟິກ ເພື່ອຕ້ານການຟອກເງິນ (APG) ແລະ ຄະນະປະເມີນຈາກປະເທດ ສປ ຈີນ, ອິນໂດເນເຊຍ, ມາເລເຊຍ, ນິວຊີແລນ, ສີລັງກາ ແລະ ໄທ ໂດຍການໃຫ້ກຽດເປັນປະທານຂອງທ່ານ ນາງ ວັດທະນາ ດາລາລອຍ, ຄະນະ ຄຕຟງ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ; ພ້ອມນີ້, ກໍ່ມີບັນດາຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ 14 ກະຊວງ ເຂົ້າຮ່ວມ.




ທ່ານ ນາງ ວັດທະນາ ດາລາລອຍ, ຄະນະ ຄຕຟງ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ກ່າວວ່າ: ປະຈຸບັນ, ສປປ ລາວ ພວມຢູ່ໃນຂັ້ນຕອນການປະເມີນຜົນຮອບດ້ານຮອບທີ 3 ຂອງກຸ່ມ APG (ຊຶ່ງເປັນການປະເມີນຮອບດ້ານຄັ້ງທີ່ 2 ຂອງ ສປປ ລາວ) ລັດຖະບານຂອງພວກເຮົາ ໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການຊີ້ນຳວຽກງານການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍຖືເອົາວຽກງານດັ່ງກ່າວເປັນວຽກງານບູລິມະສິດໜຶ່ງ ທີ່ຕ້ອງໄດ້ຮັບການປັບປຸງແກ້ໄຂ ລວມເຖິງການວາງນະໂຍບາຍ ແລະ ການນຳໃຊ້ມາດຕະການປ້ອງກັນ ແລະ ສະກັດກັ້ນບັນຫາດັ່ງກ່າວ. ແຕ່ພວກເຮົາເຫັນໄດ້ເຖິງຄວາມສຳຄັນ ແລະ ຜົນກະທົບຂອງໄພຂົ່ມຂູ່ຂອງການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງຖືເປັນອາຊະຍາກຳທີ່ຮ້າຍແຮງ ທີ່ອາດຈະກໍ່ໃຫ້ເກີດຜົນກະທົບໃຫຍ່ຫຼວງ ແລະ ເປັນອັນຕະລາຍຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງພວກເຮົາ.

ໃນໄລຍະຜ່ານມາ, ລັດຖະບານຂອງ ສປປ ລາວ ໄດ້ຮັບຮອງ ແລະ ຈັດຕັ້ງປະຕິບັດນິຕິກຳຫຼາຍສະບັບ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ນອກຈາກນີ້ຍັງໄດ້ເຜີຍແຜ່ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທັງໃນລວງກວ້າງ ແລະ ລວງເລິກ, ມີການແລກປ່ຽນຂໍ້ມູນທີ່ຕິດພັນກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ, ພາກສ່ວນຜູ້ຄຸ້ມຄອງ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຊຶ່ງໄດ້ຄ່ອຍໆພັດທະນາ ແລະ ຫັນເປັນລະບົບທັນສະໄໝຂຶ້ນເລື້ອຍໆ. ເພື່ອກະກຽມຄວາມພ້ອມຮອງຮັບໃຫ້ແກ່ການປະເມີນຜົນຮອບດ້ານ/ຮອບທີ 3 ຂອງ ສປປ ລາວ, ສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ເຮັດວຽກຢ່າງໃກ້ຊິດກັບບັນດາພາກສ່ວນທີ່ກ່ຽວຂ້ອງ,ເອົາໃຈໃສ່ຈັດຕັ້ງປະຕິບັດບັນດານິຕິກຳທີ່ກ່ຽວຂ້ອງ ແລະ ສາມາດນຳສົ່ງບົດລາຍງານດ້ານນິຕິກຳໃຫ້ແກ່ຄະນະປະເມີນທັນຕາມກຳນົດເວລາ.

ທ່ານ ນາງ ວັດທະນາ ດາລາລອຍ, ຄະນະ ຄຕຟງ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຍັງໄດ້ຢັ້ງຢືນວ່າການທີ່ ສປປ ລາວ ໄດ້ພະຍາຍາມລວບລວມຂໍ້ມູນທີ່ກ່ຽວຂ້ອງ, ປະກອບຂໍ້ມູນໃຫ້ຄົບຖ້ວນ ຕາມຄຳແນະນຳຂອງຄະນະປະເມີນ ລວມເຖິງການທຳຄວາມເຂົ້າໃຈຕໍ່ກັບ 40 ຂໍ້ແນະນຳຂອງອົງການຕ້ານການຟອກເງິນສາກົນ. ເຖິງຢ່າງໃດກໍ່ຕາມ, ນັບຕັ້ງແຕ່ ສປປ ລາວ ໄດ້ສົ່ງບົດລາຍງານດ້ານນິຕິກຳໃຫ້ຄະນະປະເມີນໃນທ້າຍເດືອນມີນາ 2020 ຜ່ານມາ, ພວກເຮົາ ໄດ້ພົບບັນຫາທ້າທາຍຫຼາຍຢ່າງທີ່ເກີດຂຶ້ນ ເປັນຕົ້ນກໍ່ແມ່ນການແຜ່ລະບາດຂອງເຊື້ອພະຍາດປອດອັກເສບ (COVID-19) ຊຶ່ງໄດ້ສົ່ງຜົນກະທົບຕໍ່ທຸກໆແຜນວຽກ ເຮັດໃຫ້ການເຄື່ອນໄຫວວຽກງານຕົວຈິງຂອງຫຼາຍພາກສ່ວນຖືກຢຸດສະງັກ ບໍ່ມີຄວາມຄືບໜ້າດ້ານປະສິດທິຜົນ ດ້ວຍສິ່ງທ້າທາຍດັ່ງກ່າວ ເຮັດໃຫ້ພວກເຮົາຈຳເປັນຕ້ອງເວັ້ນໄລຍະຫ່າງ ແລະ ຈຳຕ້ອງເຮັດວຽກໃນສະພາບແວດລ້ອມແບບໃໝ່ ເຊັ່ນດຽວກັບທີ່ພວກເຮົາຈຳເປັນຕ້ອງໄດ້ຈັດກອງປະຊຸມທາງໄກແບບນີ້ກັບກອງເລຂາ APG ແລະ 6 ປະເທດຄະນະປະເມີນຮອບດ້ານ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ